ອ່ວນສ່ວນ ແກ້ມນ້ອງແມ່ນອ່ວນສ່ວນ ສວນກ້ວຍທະນີຂົມ

ຄັນແມ່ນລືມສາວໃດ ກາບໍ່ຄືແມ່ນລືມນ້ອງ....

| | | |
|---|---|---|
| ສາວດອນ, | ຫຼົງຮັກມາແຕ່ນານແລ້ວ | ແນວສາວດອນເພິ່ນທ່າໃຫຍ່.... |
| | ຄັນຊິຫງັບນໍເຂົ້າໃກ້ | ອ້າຍກົວຢ້ານເພິ່ນບໍ່ມອງ.... |
| ຈັ່ງວ່າ | ຈຳເປັນໄດ້ແຕ່ຈ້ອງ | ທັງຈອບສ່ອງມອງຫາ |
| | ຫວັງຊິສືບສາຍຕາ | ປາຖານາທຸກແລງເຊົ້າ |
| | ເພິ່ນພັດມີຄົນເຝົ້າ | ທັງຄົນແຫນເປັນຫມູ່ |
| | ໃຈເຮົາຄິດນໍທົດຫູ່ | ແນວເພິ່ນຮຽນຮຸ່ນເອື້ອຍ ບໍ່ຫານກ້າຊິເອີ່ຍຖາມ |
| ສາວດອນ | ເປັນຄົນງາມຄົນເຂົາຍ້ອງ | ຫຼາຍຄົນປອງຢາກລຶ້ງແກ່ນ |
| | ຢາກເປັນຫມູ່ຫ້ວງເປັນແຟນ | ຫງັ່ງກາເປັນວຸ້ນໆ ຢາກວຽນເຂົ້າກ່າວຈາ |
| ອີ່ຕົນ | ຕັ້ງສາມປີທີ່ເຮົາຖ້າ | ຢາກວາຈາຖາມໄຖ່ |
| | ສິພັນດອນສາວທ່າໃຫຍ່ | ບໍ່ເຄີຍຫຼຽວເບິ່ງຊໍ້າ...ຊິຕຳຫນ້າບໍ່ທັກເຮົາ |
| ສົມດັ່ງ | ຮັກບໍ່ທັນໄດ້ເວົ້າ | ມັນຫາກເນົ່າແມ່ນນູມໃນ |
| | ອ້າຍຫມົດຫວັງແມ່ນທາງໃຈ | ຍ້ອນຮັກຫຼາຍໃຈອົດກັ້ນ |
| | ທຸກຄືນວັນໄດ້ນອນກຸ້ມ | ມໍຣະສຸມຮັກເຝົາແຜດ |
| | ແດດບໍ່ມີພັດຊ່າງເອົ້າ | ມັນເຝົາໄຫມ້ຮ້ອນຮົນ |
| ແຕ່ແລ້ວ | ການຮ່ຳຮຽນຜ່ານພົ້ນ | ສາວດອນຈາກຕອນຮຽນຈົບ |
| | ຄົບຫຼັກສູດວິຊາຮຽນ | ຕັ້ງສີ່ປີດີໄດ້ |
| | ໃຈຄະນຶງບໍ່ມີມົ້ນ | ສາວຕາຄົມພັດຊິຈາກ |
| | ພາກັນນໍແຕ່ທີ່ນີ້ | ຊິໄປກ້ຳແກ່ວໃດ |
| ຈັ່ງວ່າ | ມັນພັດເຕັມທີອ້າຍ | ຜູ່ເນົາໃນຍັງຮຽນຕໍ່ |
| | ໃຈທີ່ເຄີຍຈິດຈໍ່ | ຫວັງຢາກເປັນຄູ່ເຈົ້າ ພັດຫນີຈ້ອຍຫ່າງຈອນ |
| ຈາກນັ້ນ | ເມືອງສອງຄອນບ່ອນນາງເຊົ້າ | ປະຈຳການບ້ານນາງຢູ່ |
| | ເປັນເອື້ອຍຄຣູຜູ່ພຽບພ້ອມ | ຊາຍຕອມຫຸ້ມແອ່ວວອນ |
| ຕອນນັ້ນ | ບ້ານເມືອງເກີດເດືອດຮ້ອນ | ຍ້ອນລະບອບໃຫມ່ນຳພາ |

| | | |
|---|---|---|
| | ອ້າຍສືບຫານວນນາງ | ສິ່ງຂ່າວຄາວຫານ້ອງ |
| ແຕ່ແລ້ວ | ຫົວໃຈຫມອງຊິພັງປົ້ນ | ພໍ່ຢາກປົນກົກຫນາມແທ່ງ |
| | ຍິນວ່າສາວດອນແຕ່ງ | ກັບຕຳຣວດຜູ່ຮູບໂກ້  ທີ່ມີຫນ້າລື່ນຄົນ |
| ແຕ່ນັ້ນ | ໃຈສັບສົນຄົນເຂົາເວົ້າ | ເຕັມທີ່ເຮົາຜູ້ຟັງຂ່າວ |
| | ຢາກເປັນລົມລົ້ມທ່າວ | ສາວດອນມີຄູ່ແລ້ວ  ເອົາຜົວຊ້ອນຢູ່ຊົມ |
| ເມື່ອນັ້ນ | ຊີວິດອ້າຍຈຶ່ງບໍ່ມົ້ນ | ກາຍເປັນຫນຸ່ມອົກຫັກ |
| | ມັກສາວດອນບໍ່ແລຫຼຽວ | ມັນຫ່ຽວໃຈຢາກຕາຍມ້ວຍ |
| ອີ່ຕົນ | ເປັນຄວາຍຊົນຄົນເສົ້າ | ແສນເຫງົາໃຈເສັຽດາຍອຸ່ນ |
| | ບຸນບໍ່ສົມກັມບໍ່ສ້າງ | ຈຶ່ງລາຮ້າງຫ່າງໃກ |
| ຕອນນັ້ນ | ຄວາມເສັຽໃຈທະວີກຸ້ມ | ປານກັບຄວັນສຸມໄຮ່ |
| | ອົດທົນຮຽນໄປບໍ່ພົ້ນ | ຈຶ່ງໂຕນເຕັ້ນຂ້າມຝັ່ງໄທ |
| ຫວັງວ່າ | ຫວັງຫນີໄປຕາຍຫນ້າ | ບໍ່ເສັຽດາຍຄັນຕາຍມອດ |
| | ຄວາມຮັກຈອດບໍ່ອາດຈັ້ງ | ຄວາມຫວັງມ້ວຍມອດສລາຍ |
| ຈັ່ງວ່າ | ຄວາມຮັກຫຼາຍຄວາມອາຍລົ້ນ | ສາລະວົນເອົ້າອັ່ງ |
| | ຫມຸນວຽນໄປຄືຫມາກຄ່າງ | ໄປບໍ່ມີທີ່ຊົ້ນ  ເປັນຄົນໄຮ້ທີ່ນອນ |
| ຕອນນັ້ນ | ພະເນຈອນໄປເລື້ອຍ | ຄືກັບເພືອຍເຄືອຕົນຕັ່ງ |
| | ຢັ່ງມັນໄປເບື້ອງຫນ້າ | ຊີກຸດມ້ວຍແມ່ນບໍ່ສົນ |
| ບັ້ນທ້າຍ | ຈົນວ່າຫນີຫຼີກພົ້ນ | ກາຍເຂດແມ່ນເມືອງໄທ |
| | ໄດ້ມາເຖິງອະເມຣິກາ | ບ້ານຈະເຣີນເມືອງກວ້າງ |
| ແຕ່ວ່າ | ບໍ່ເຄີຍລືມໄລມ້າງ | ສີພັນດອນຜູ່ຮູບຄ່ອງ |
| | ເຖິງຢູ່ໃກແຕ່ໃຈປອງ | ສືບເບິ່ງຄວາມສຸຂທຸກນ້ອງ    ຖາມຄົນຮູ້ສືບບໍ່ເຊົາ |
| ຂ່າວມາ | ເຂົາວ່າສາວດອນເຂົ້າ | ສູນອຸບົນເອົາຕົວລອດ |
| | ຮອດເມືອງໄທຮຽບຮ້ອຍ | ໃຈຂ້ອຍໄດ້ຄິດນຳ |
| ຄິດເບິ່ງ | ແສນດີໃຈແມ່ນຍິ່ງລ້ຳ | ຢາກບິນດ່ວນມາຮັບ |
| | ມາຈັບມືຄວາມຍິນດີ | ທີ່ນ້ອງຫນີມາໄດ້ |
| ແຕ່ວ່າ | ກ່ອນວ່າດອນຊິມາໄດ້ | ເກືອບສູນໄປຕາຍມອດ |

ປອດພັຍໄກບ່ອນວຸ້ນ ຍ້ອນບຸນຄໍ້າຊ່ວຍຫຼາຍ
ອີກຢ່າງ ດອນກໍເອົາຕົນຜ້າຍ ມາຄົນດຽວບໍ່ມີຄູ່
ມາອາສັຍຊຸ້ນຢູ່ ສູນອຸບົນນຳພີ່ນ້ອງ ນາງຫມອງເສົ້າບໍ່ວາຍ
ຕອນນັ້ນ ສາລະວົນໃຈອ້າຍ ຢາກເມືອໄທໄປຖາມຂ່າວ
ແຕ່ພັດມີອີກຂ່າວ ວ່ານາງມີຄູ່ຊ້ອນເອົາຜົວສ້າງຄອບຄົວ
ເຂົາວ່າ ນາງເອົາຜົວປະຈ້ອຍ ເປລບອຍ ບ້ານເລົ່ານາດ
ເປີດອາດລາດຫອບຫໍ່ຜ້າ ຫວັງຄົນຊຸ້ນເພິ່ງພິງ
ຍ້ອນວ່າ ເປັນຜູ່ຍິງຕົວນ້ອຍ ຫົວໃຈພອຍຄວາມຫຼັງປ່ຽວ
ຢູ່ຄົນດຽວເຣື່ອງຊິເສົ້າ ເອົາຜົວຊ້ອນຮ່ອນຊິດີ
ແຕ່ວ່າ ແສນເຕັມທີທາງອ້າຍ ຜູ່ຫມາຍເປັນຊູ້ເກົ່າ
ຄືເຮົາເປັນພຽງຜູ້ເຝົ້າ ຄືກັບເຈົ້າຫມາການ່ວງແພງ
ຄືດັ່ງ ເປັນມົດແດງຢູ່ໃນຕົ້ນ ເຝົ້າຈົນຄົນເຂົາມາແກວ່ງ
ມົດແດງເປັນຜູ່ເຝົ້າ ຄົນເຂົາຊໍ້າພັດລັກກິນ
ຕອນນັ້ນ ເກືອບເປັນວິນເມື່ອເຮົາຮູ້ ສາວເອື້ອຍຄຣູຊ່າງໃຈງ່າຍ
ພຽງເຫັນເຂົາມາເວົ້າຫມ່າຍ ຍົກຫົວໃຈເຈົ້າມອບມ້ວນ ເຂົາຊວນເຈົ້າເຂົ້າບ່ອນນອນ
ຈັ່ງວ່າ ສີພັນດອນຄືມາຊໍ້າ ທຽວຕອກຕຳອ້າຍຫຼາຍເທື່ອ
ຄຶດຂຶ້ນມາອ້າຍໂລດເບື່ອ ບໍ່ຢາກເຫັນຮອດຫນ້າ ຜູ້ຍິງລ້ວນທຸກຄົນ
ເອົາລະ ຄວາມຜິດຫວັງຂອງອ້າຍ ບັນລະຍາຍບໍ່ສຸດສ່ວງ
ເກືອບຊິເປັນບ້າປ່ວງ ສີພັນດອນໄດ້ເຮັດອ້າຍ ເກືອບຕາຍຍ້ອນຮັກນາງ
ເຖິງວ່າ ຄວາມສົມຫວັງບໍ່ມີພໍ້ ກັມຫຼັງນໍແຕ່ປາງກ່ອນ
ຮັກບໍ່ໄດ້ຢູ່ຊ້ອນ ຍັງເຫຼືອໄວ້ແຕ່ຄິດເຖິງ
ແມ່ນວ່າ ມັນຈະເຫິງນານລໍ້າ ຄວາມຊົງຈຳຍັງຝັງຢູ່
ບໍ່ໄດ້ຄູ່ນ້ອງຊາຕນີ້ ຍັງຫວັງໄວ້ຊາຕຊິມາ.....